ຮູ້ສຶກອຸກໃຈຫວາ? ໂທຫາເຮົາເດີ້.
ບໍ່ສະບາຍໃຈບໍ? ໂທຫາເຮົາກໍໄດ້.
ຫຼືວ່າເຫງົາ? ກໍຍັງໂທຫາເຮົາໄດ້!

# ເບີໂທສາຍດ່ວນ ທີ່ທ່ານຕ້ອງຮູ້






ພິດສະພາ 2021, ສະໜັບສະໜູນໂດຍ:
LUXEMBOURG AID & DEVELOPMENT

ພ້ອມແລ້ວທີ່ຈະໃຫ້ບໍລິການ
ດ້ວຍຄວາມເປັນມິດ ແລະ ປິດລັບ

- ເມື່ອພົບເຫັນກໍລະນີໃຊ້ຄວາມຮຸນແຮງຕໍ່ກັບແມ່ຍິງ-ເດັກນ້ອຍ, ໃຫ້ໂທຫາ:

**1362**

ເພື່ອຕິດຕໍ່ຫາສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ ໂດຍສູນກາງສະຫະພັນແມ່ຍິງລາວ ໂດຍບໍ່ເສັຍຄ່າ ເພື່ອຂໍຄຳປຶກສາ ແລະ ການຊ່ວຍເຫຼືອຕະຫຼອດ 24 ຊົ່ວໂມງ.

- ຖ້າຕ້ອງການປຶກສາກ່ຽວກັບສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ, ໃຫ້ໂທຫາ:

**1361** (ສຳລັບທ່ານຍິງ)

**137** (ສຳລັບທ່ານຊາຍ)

ເພື່ອຂໍຄຳປຶກສາຈາກສູນສຸຂະພາບ ພັດທະນາ ແມ່ຍິງ ແລະ ໄວໜຸ່ມ ນະຄອນຫຼວງວຽງຈັນ ສຳລັບໄວໜຸ່ມທີ່ມີຂໍ້ຂ້ອງໃຈກ່ຽວກັບ ການປ່ຽນແປງຮ່າງກາຍ, ໂພຊະນາການ, ການເປັນປະຈຳເດືອນ, ຄວາມສຳພັນ, ການມີເພດສຳພັນທີ່ບໍ່ໄດ້ປ້ອງກັນ, ພະຍາດຕິດຕໍ່ທາງເພດສຳພັນ, HIV/AIDs, ການວາງແຜນຄອບຄົວ, ການດູແລໃນໄລຍະຖືພາຂອງໄວໜຸ່ມ ແລະ ການຊ່ວຍເຫຼືອທາງດ້ານຈິດຕະສັງຄົມອື່ນໆ.

- ສຳລັບໄວໜຸ່ມທີ່ຕ້ອງການລະບາຍຄວາມອຶດອັດ, ຕ້ອງການທີ່ປຶກສາແບບເພື່ອນມິດ ເພື່ອຜ່ອນຄາຍສະໝອງ, ໃຫ້ໂທຫາ:

**1554**

| | |
|---|---|
| 020 7788 0044 | 020 5401 6336 |
| 020 5536 0978 | 020 5536 0961 |
| 020 5536 1055 | 020 5513 3045 |
| 020 5513 2507 | 020 5513 2046 |
| 020 5513 2303 | |

ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ສ້າງທີມງານໃຫ້ຄຳປຶກສາ ເພື່ອໃຫ້ໄວໜຸ່ມມີພື້ນທີ່ປອດໄພ ແລະ ສະບາຍໃຈທີ່ຈະສົນທະນາກ່ຽວກັບສຸຂະພາບ, ການຮຽນ, ຄວາມຮັກ, ຄອບຄົວ ແລະ ບັນຫາສັງຄົມທົ່ວໄປ.

ເພິ່ນໃຫ້ຄຳປຶກສາໄດ້ຢ່າງສະດວກ ແລະ ເປັນກັນເອງທີ່ສຸດ,ສາມາດຕິດຕໍ່ຜ່ານ WhatsApp ຫຼື ສົ່ງຂໍ້ຄວາມຫາ ເພື່ອໃຫ້ເພິ່ນໂທກັບກໍໄດ້.

- ຫຼື ດາວໂຫຼດແອັບ "ນ້ອຍຢາກຮູ້" ທີ່ຮວບຮວມຂໍ້ມູນຂ່າວສານກ່ຽວກັບ ສຸຂະພາບ, ເພດສຳພັນ, ບົດບາດຍິງ-ຊາຍ ແລະ ບັນຫາສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ

Noi Yakhoo

